# ໂຮງງານເກີບທັນວາ




ປະຕູທາງເຂົ້າໂຮງງານເກີບທັນວາ

## I. ປະຫວັດກຳເນີດຂອງໂຮງງານເກີບທັນວາ.

**ໄລຍະທີ່ 1**: ວັນທີ 21 ມິຖຸນາ 1976 ທ່ານ ແສງສຸວັນ ໄດ້ມອບໂຮງງານຜະລິດເກີບຂອງຕົນເອງໃຫ້ແກ່ກະຊວງປ້ອງກັນປະເທດ, ເຊິ່ງກົມໃຫຍ່ພະລາທິການເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ໂຮງງານດັ່ງກ່າວ. ໂຮງງານແຫ່ງນີ້ຕັ້ງຢູ່ບ້ານສີສັງວອນ, ເມືອງໄຊເສດຖາ, ກຳແພງນະຄອນວຽງຈັນ, ໃນເບື້ອງຕົ້ນແມ່ນລຸງຈັນ ແລະ ຮ້ອຍເອກ ນາງ ວັນດີ ທຳມະສິດ ເປັນຄະນະຮັບຜິດຊອບ, ໂດຍມີເຄື່ອງຈັກປ້ຳເກີບແພ 30 ເຄື່ອງ, ຈັກປະສົມເຄມີ 4 ເຄື່ອງ, ມີແຮງງານທັງໝົດ 30 ກວ່າຄົນ.

ມາຮອດເດືອນ ກັນຍາ 1982 ໂຮງງານໄດ້ຍົກຍ້າຍສະຖານທີ່ການຜະລິດ ມາຕັ້ງຢູ່ຄຸ້ມບ້ານໂພນໄຊ, ເມືອງໄຊເສດຖາ ໂດຍແມ່ນທ່ານ ພັນຕີ ສີເມືອງ ໄຊຍະວົງ ເປັນຫົວໜ້າອຳນວຍການ, ຄວາມສາມາດໃນການຜະລິດເກີບແພຊຽວ ແມ່ນ 200.000 ຄູ່ຕໍ່ປີ, ເກີບໜັງ 2.400 ຄູ່ຕໍ່ປີ, ຜະລິດຕະພັນດັ່ງກ່າວແມ່ນຮັບໃຊ້ກອງທັບປະຊາຊົນລາວ, ການຜະລິດໄດ້ດຳເນີນມາຮອດທ້າຍປີ 1991 ໂຮງງານໄດ້ຢຸດເຊົາການຜະລິດ ຍ້ອນການຕອບສະໜອງວັດຖຸ-ເຄມີ ມາແຕ່ຕ່າງປະເທດບໍ່ທ່ວງທັນ ບວກໃສ່ເຄື່ອງຈັກກໍ່ເກົ່າແກ່-ຊຸດໂຊມ, ແລະ ກົມອຸປະໂພກ-ບໍລິໂພກ ກົມໃຫຍ່ພະລາທິການກອງທັບ ຈຶ່ງໄດ້ນຳເຂົ້າບັນດາເກີບແພ-ເກີບໜັງສຳເລັດຮູບມາຈາກ ສປ ຈີນ ແລະ ສສ ຫວຽດນາມ.

**ໄລຍະທີ 2**: ຍ້ອນຄວາມຮຽກຮ້ອງຕ້ອງການເຄື່ອງອຸປະໂພກ ຮັບໃຊ້ກອງທັບ ແລະ ເປັນການຫຼຸດຜ່ອນການນຳເຂົ້າຈາກຕ່າງປະເທດ, ມາເຖິງວັນທີ 29 ພະຈິກ 2002 ກະຊວງປ້ອງກັນປະເທດ ຈຶ່ງໄດ້ຕົກລົງມອບໂຮງງານເກີບ ຫຼັກ 19 ທ່າງ່ອນ ໃຫ້ກົມໃຫຍ່ພະລາທິການກອງທັບ ເປັນຜູ້ຄຸ້ມຄອງ ແລະ ນຳໃຊ້. ທ້າຍເດືອນ ທັນວາ 2004 ກະຊວງປ້ອງກັນປະເທດ ໄດ້ມອບໜ້າທີ່ໃຫ້ກົມໃຫຍ່ພະລາທິການກອງທັບປະຊາຊົນລາວ ປະສານສົມທົບກັບກົມໃຫຍ່ພະລາທິການກອງທັບປະຊາຊົນຫວຽດນາມ,ໂດຍແມ່ນ ບໍລິສັດ 32 ສສ ຫວຽດນາມ ເພື່ອສຳຫຼວດ, ສ້ອມແປງອາຄານການຜະລິດ ກໍ່ສ້າງຫ້ອງການ, ສະໂມສອນ, ຟື້ນຟູເຄື່ອງຈັກທີ່ມີແລ້ວ ແລະ ຈັດຊື້ເຄື່ອງຈັກອັດພື້ນ, ຈັກຮີດປະສົມເຄມີປະກອບເພີ່ມເຕີມອີກຈຳນວນໜຶ່ງ. ພ້ອມນັ້ນ ກໍ່ໄດ້ຄັດເລືອກເອົາພະນັກງານວິຊາການຝ່າຍລາວ ໄປຝຶກອົບຮົມວຽກງານ ເຕັກນິກການຜະລິດເກີບ ຢູ່ ສ.ສ ຫວຽດນາມ.



ຫ້ອງການອຳນວຍການໂຮງງານ



ອາຄານທຳການຜະລິດ

ມາຮອດວັນທີ 6 ຕຸລາ 2005 ໂຮງງານເກີບທັນວາ ໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການ, ຕາມຂໍ້ຕົກລົງເລກທີ່ 1751/ກປທ ຂອງລັດຖະມົນຕີ ວ່າການກະຊວງປ້ອງກັນປະເທດ, ພາຍຫຼັງປະກອບເຄື່ອງຈັກສຳເລັດ ແລະ ທົດລອງຜະລິດເກີບແພມາໄດ້ໄລຍະໜຶ່ງ, ມາຮອດວັນທີ 31 ມີນາ 2006 ໂຮງງານເກີບທັນວາ ໄດ້ຈັດພິທີມອບ-ຮັບ ຢ່າງເປັນທາງການ ແລະ ໄດ້ທຳການຜະລິດຢ່າງເປັນປົກກະຕິຈົນເຖິງປະຈຸບັນ.



ເຄື່ອງຈັກປະສົມຢາງພື້ນເກີບດ້ວຍບັນດາທາດປະສົມຕາມມາດຕະຖານສາກົນ.



ເຄື່ອງຈັກຕັດຢາງພື້ນເກີບໃຫ້ໄດ້ຕາມຂະໜາດທີ່ຕ້ອງການ.

**ພາລະບົດບາດ:** ໃນເບື້ອງຕົ້ນ ເປັນໂຮງງານທຳການຜະລິດເກີບແພຄໍສູງຊາຍຮັບໃຊ້ກອງທັບ, ຍ້ອນການຜະລິດເຄື່ອງນຸ່ງຫົ່ມຮັບໃຊ້ກອງທັບ ມີການຂະຫຍາຍຕົວ, ໃນປະຈຸບັນ ແມ່ນຜະລິດເກີບແພຄໍສູງ, ພື້ນສູງຊາຍ, ຜະລິດບາໂລ, ຫຍິບຜ້າອູ່, ສົບຜ້າຫົ່ມ ແລະ ຮັບເໝົາຫຍິບເຄື່ອງຮັບໃຊ້ສັງຄົມຈຳນວນໜຶ່ງ.

**ຮູບແບບການຜະລິດ:** ແມ່ນຜະລິດແບບບໍລິຫານ ແຕ່ມີການໄລ່ລຽງຄັກແນ່ (ຮັບເງິນເດືອນ,ເຄື່ອງອຸປະໂພກ-ບໍລິໂພກ ແລະ ນະໂຍບາຍອື່ນໆ ຄືກັບກົມກອງບໍລິຫານທົ່ວໄປ).

## ຂັ້ນຕອນການຜະລິດເກີບແພຄໍສູງ.

### I. ຂັ້ນຕອນຜະລິດພື້ນເກີບ.



1. ປະສົມຢ່າງພື້ນເກີບ



2. ທົດສອບມາດຕະຖານຂອງຢ່າງພື້ນເກີບ.



3. ນຳເຂົ້າເຄື່ອງປ້ຳແບບພື້ນເກີບ.



4. ພື້ນເກີບຕາມຂະໜາດທີ່ຕ້ອງການ.

## II. ຂັ້ນຕອນກຽມແພ



ຕັດແພໂຕເກີບຕາມຂະໜາດ



ຕັດແພຮອງທາງໃນພື້ນເກີບ



ຫຍິບແພເປັນໂຕເກີບ



ຕອກຮູສາຍເກີບ

## III. ຂັ້ນຕອນປະກອບພື້ນເກີບເຂົ້າກັບແພໂຕ



ກະກຽມຢາງຮອງເຊື່ອມພື້ນເກີບ



ດຳເນີນເຊື່ອມຕໍ່ພື້ນເກີບເຂົ້າກັບແພເກີບ

## IV. ຂັ້ນຕອນກວດກາ ແລະ ຈັດສົ່ງ.



ກວດກາຂັ້ນຕອນສຸດທ້າຍ



ປະກອບຄົບຊຸດເປັນຄູ່



ບັນຈຸເຂົ້າຫີບ



ຂົນສົ່ງໄປສ້າງກົມອຸປະໂພກ-ບໍລິໂພກ

**II.** ວຽກງານວິຊາສະເພາະ: (ສະເພາະປີ 2010).

1./ ພື້ນຖານຍັງຜະລິດ 2 ຜະລິດຕະພັນ ຄື: ເກີບແພຄໍສູງຊາຍ 150,000 ຄູ່ຕໍ່ປີ, ບາໂລ 30,000 ໜ່ວຍຕໍ່ປີ. ໄດ້ປັບປຸງຄຸນນະພາບ-ຮູບຊົງ (ດັດແປງແບບຟອມ) ຄືນໃໝ່ ແລະ ປັບປຸງສູດປະສົມພື້ນເກີບຄືນໃໝ່ ລວມທັງໝົດ 7 ນ້ຳເບີ້ ໃຫ້ມີສີສັນຈົບງາມ, ທົນທານແທດເໝາະກັບສະພາບຜູ້ຊົມໃຊ້ໃນປະຈຸບັນ.

ນອກນັ້ນ ຍັງໄດ້ອອກແບບເກີບແພຄໍຍາວ (ຄ້າຍຄືເກີບໂຊຟາຍ), ອອກແບບເກີບແພຄໍຕ່ຳ, ເກີບແພລາຍສະໜາມ ໄດ້ຈຳນວນໜຶ່ງ.

ພ້ອມນັ້ນ, ຍັງໄດ້ຕັດຫຍິບຜ້າອູ່, ຊິບຜ້າຫົ່ມ, ມຸ້ງ ແລະ ຮັບເໝົາຫຍິບເກີບຈາກຜູ້ຮັບເໝົາ ເພື່ອຍົກລະດັບສີມືການຜະລິດ ແລະ ທັງເປັນການສ້າງລາຍຮັບເພີ່ມໃຫ້ພະນັກງານ-ນັກຮົບພາຍໃນກົມກອງ.

2./ ຜະລິດຕະພັນທີ່ໂຮງງານຜະລິດໄດ້ ຄື: ເກີບແພຄໍສູງຊາຍ ແລະ ບາໂລ ແມ່ນສິ່ງເຂົ້າສາງຂອງກົມອຸປະໂພກ-ບໍລິໂພກ 100%, ສ່ວນຜະລິດຕະພັນອື່ນໆ ທີ່ຮັບເໝົາຜະລິດທາງນອກ ແມ່ນເປັນການສ້າງລາຍຮັບເຂົ້າກົມກອງ

3./ ນອກຈາກໂຮງງານເພີ່ມພູນແລ້ວ ໂຮງງານຍັງມີຮ້ານຄ້າ-ຮ້ານກິນດື່ມ ຮັບໃຊ້ພະນັກງານ-ນັກຮົບ ແລະ ຮັບເໝົາຫຍິບເຄື່ອງທາງນອກ ຄິດເປັນມູນຄ່າທັງໝົດ: 65,728,076 ກີບ, ປະຕິບັດລື່ນແຜນການ 23.3% (ແຜນການວາງໄວ້).

ເວົ້າລວມແລ້ວ, ໃນໜຶ່ງປີຜ່ານມາ ກົມກອງສາມາດສ້າງລາຍຮັບໄດ້ທັງໝົດ 73,978,076 ກີບ, ປະຕິບັດລື່ນແຜນການ 23.3% ຄື: (ແຜນການວາງໄວ້ ຜູ້ໜຶ່ງ/500,000 ກີບ/ປີ ລວມ: 60,000,000 ກີບ/ປີ, ແຕ່ຕົວຈິງຜູ້ໜຶ່ງໄດ້: 616,483 ກີບ/ຄົນ/ປີ).

## ຜະລິດຕະພັນຂອງໂຮງງານເກີບທັນວາ











